ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້

ເລກທີ 2051 /ກປ

ນະຄອນຫຼວງວຽງຈັນ, ວັນທີ 30 MAY 2014

# ຄຳສັ່ງ
## ຂອງລັດຖະມົນຕີ
## ກ່ຽວກັບການຄອບຄອງສັດປ່າຫວງຫ້າມ ບັນຊີ I
## ຢູ່ ແຂວງຫລວງນ້ຳທາ, ອຸດົມໄຊ ແລະ ນະຄອນຫລວງວຽງຈັນ

ເຖິງ: - ທ່ານ ຫົວໜ້າກົມກວດກາປ່າໄມ້;
- ທ່ານ ຫົວໜ້າພະແນກກະສິກຳ ແລະປ່າໄມ້ ປະຈຳແຂວງ ຫຼວງນ້ຳທາ, ອຸດົມໄຊ ແລະ ນະຄອນຫຼວງວຽງຈັນ.

- ອີງຕາມກົດໝາຍວ່າດ້ວຍສັດນ້ຳ ແລະສັດປ່າ ເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 262/ນຍ, ລົງວັນທີ 28 ມິຖຸນາ 2012 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງກະສິກຳ ແລະປ່າໄມ້;
- ອີງຕາມບົດລາຍງານຂອງກົມກວດກາປ່າໄມ້ ເລກທີ 0345/ກກປມ, ລົງວັນທີ 18 ມີນາ 2014.

ໃນໄລຍະຜ່ານມາ, ຂະແໜງການຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ແລະປະຊາຊົນລາວບັນດາເຜົ່າໄດ້ຖືສຳຄັນ ແລະ ເປັນເຈົ້າການ ເຊີດຊູສະຕິຮັກ, ຫວງແຫນ, ຖະໜອມ, ຄຸ້ມຄອງ, ກວດກາ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະນຳໃຊ້ສັດນ້ຳ ແລະສັດປ່າຕາມທິດຍືນຍົງເປັນຢ່າງດີ. ແຕ່ຄຽງຄູ່ກັບນັ້ນ, ກໍຍັງມີປະກົດການຫຍໍ້ທໍ້ເກີດຂຶ້ນຢ່າງຕໍ່ເນື່ອງໃນຫຼາຍທ້ອງຖິ່ນ ຍ້ອນຄວາມລະເຫລີງໃນການປະຕິບັດລະບຽບກົດໝາຍ. ຜ່ານການລົງກວດກາໃນກາງເດືອນມີນາ ໄດ້ພົບເຫັນໝີ ຈຳນວນ 51 ຕົວ ຊຶ່ງເປັນສັດປ່າປະເພດຫວງຫ້າມກຳນົດໄວ້ໃນບັນຊີ I ໄດ້ຖືກຄອບຄອງໄວ້ໂດຍບຸກຄົນ ຢູ່ແຂວງຫຼວງນ້ຳທາ, ອຸດົມໄຊ ແລະນະຄອນຫຼວງວຽງຈັນ. ການຄອບຄອງໝີດັ່ງກ່າວ ແມ່ນບໍ່ໄດ້ດຳເນີນໄປ ຕາມລະບຽບກົດໝາຍ ທີ່ລັດວາງອອກ ແລະ ບໍ່ສອດຄ່ອງ ກັບສົນທິສັນຍາສາກົນ ທີ່ ສປປ ລາວເປັນພາຄີ ເປັນຕົ້ນ ສົນທິສັນຍາໄຊແຕັດ (CITES) ແລະ ລາວເວນ (LAO-WEN). ສະນັ້ນ ຈຶ່ງຕ້ອງໄດ້ແກ້ໄຂເພື່ອໃຫ້ເກີດຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໂດຍໄວ.

ຕໍ່ບັນຫາດັ່ງກ່າວ, ໄປຄວບຄູ່ກັບການສືບຕໍ່ຍູ້ແຮງວຽກງານບັງຄັບໃຊ້ກົດໝາຍ ວ່າດ້ວຍສັດນ້ຳແລະສັດປ່າໃຫ້ໄດ້ດີ ພ້ອມດຽວກັນກໍປະຕິບັດພັນທະເຊື່ອມໂຍງສາກົນ,

### ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ອອກຄຳສັ່ງ:

1. ໃຫ້ພະແນກກະສິກຳ ແລະປ່າໄມ້ ປະຈຳແຂວງຫຼວງນ້ຳທາ, ອຸດົມໄຊ ແລະນະຄອນຫຼວງວຽງຈັນຊີ້ນຳກອງກວດກາປ່າໄມ້ຂອງຕົນ ເພື່ອປະສານສົມທົບກັບພະແນກການຂອງແຂວງ ແລະອົງການປົກຄອງເມືອງ ທີ່ກ່ຽວຂ້ອງ ລົງກວດກາໝີຈຳນວນ 51 ໂຕ ທີ່ບຸກຄົນມີໄວ້ຄອບຄອງໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍນັ້ນ ຄືນໃໝ່

ພ້ອມທັງສຶກສາອົບຮົມ, ຊີ້ແຈງ ແລະອະທິບາຍໃຫ້ເຫັນໄດ້ເຖິງຄວາມສຳຄັນ ຂອງສັດປ່າປະເພດຫວງຫ້າມ ລວມທັງເນື້ອໃນຈິດໃຈຂອງກົດໝາຍວ່າດ້ວຍສັດນ້ຳ ແລະສັດປ່າ ເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007 ໂດຍສະເພາະແມ່ນມາດຕາ 36, 52 ແລະພາກທີ VIII ເພື່ອໃຫ້ຜູ້ຄອບຄອງສັດມອບພືດັ່ງກ່າວຄືນໃຫ້ລັດ ນຳໄປປ່ອຍຄືນສູ່ທຳມະຊາດ ຫຼືຖິ່ນທີ່ຢູ່ອາໄສ ຂອງປະເພດສັດດັ່ງກ່າວ ຫລືຂໍອະນຸຍາດຄອບຄອງສັດປ່າດັ່ງກ່າວ ຕາມຂັ້ນຕອນ ຢ່າງຖືກຕ້ອງຕາມລະບຽບກົດໝາຍ ໂດຍສະເພາະກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ມາດຕາ 11; 21, 23 ແລະ 24;

2. ໃຫ້ກອງກວດກາປ່າໄມ້ ປະຈຳແຂວງຫຼວງນ້ຳທາ, ອຸດົມໄຊ ແລະນະຄອນຫຼວງວຽງຈັນ ເປັນເຈົ້າການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງໃນຂັ້ນຂອງຕົນ ເພື່ອພ້ອມກັນສືບຕໍ່ ຕ້ານ ແລະສະກັດກັ້ນການລັກລອບຊື້-ຂາຍ, ມີໄວ້ຄອບຄອງສັດນ້ຳ ແລະ ສັດປ່າປະເພດຫວງຫ້າມແບບບໍ່ຖືກຕ້ອງຕາມລະບຽບກົດໝາຍຢ່າງເຂັ້ມງວດ ໂດຍນຳໃຊ້ວິທີການສືບສວນ-ສອບສວນ ແລະມາດຕະການສະກັດກັ້ນ ຕາມທີ່ໄດ້ກຳນົດໄວ້ໃນພາກທີ VI ຂອງກົດໝາຍ ວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ເລກທີ 17/ສພຊ, ລົງວັນທີ 10 ກໍລະກົດ 2012 ແລະໝວດທີ 2 ພາກທີ VI ຂອງກົດໝາຍວ່າດ້ວຍສັດນ້ຳ ແລະສັດປ່າ ເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007 ເພື່ອນຳເອົາຜູ້ກະທຳຜິດມາລົງໂທດ, ເຮັດໃຫ້ການຄຸ້ມຄອງ ແລະ ດຳເນີນທຸລະກິດສັດນ້ຳ ແລະ ສັດປ່າ ເຂົ້າສູ່ລະບຽບກົດໝາຍ ຕາມທີ່ໄດ້ກຳນົດໄວ້ໃນພາກທີ 4 ຂອງກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ແລະ ສັງຄົມມີຄວາມສະຫງົບ;

3. ໃຫ້ກົມກວດກາປ່າໄມ້ ສົມທົບກັບພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງຫຼວງນ້ຳທາ, ອຸດົມໄຊ ແລະ ນະຄອນຫຼວງວຽງຈັນ ເພື່ອຊີ້ນຳ ຕິດຕາມ ກວດກາການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ພ້ອມທັງສະຫຼຸບລາຍງານຂໍ້ສະດວກ, ຂໍ້ຫຍຸ້ງຍາກ ໃຫ້ການນຳກະຊວງກະສິກຳ ແລະປ່າໄມ້ໄດ້ຮັບຊາບເປັນປົກກະຕິ ເພື່ອຫາວິທີແກ້ໄຂຢ່າງທັນການ;

4. ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້

ວິໄລວັນ ພົມແຂ

ບ່ອນສົ່ງ:

1. ຫ້ອງວ່າການສູນກາງພັກ 01 ສະບັບ (ໃຊ້ຕາງລາຍງານ);
2. ຫ້ອງວ່າການລັດຖະບານ 01 ສະບັບ (ໃຊ້ຕາງລາຍງານ);
3. ທ່ານ ລມຊ ທ່ານລະ 01 ສະບັບ (ເພື່ອຊາບ);
4. ຫ້ອງວ່າການປົກຄອງນະຄອນຫລວງ,
   ແຂວງກ່ຽວຂ້ອງ 03 ສະບັບ (ເພື່ອຊ່ວຍຊີ້ນຳ);
5. ຫ້ອງການກະຊວງ 01 ສະບັບ (ເພື່ອຊາບ);
6. ກົມກວດກາ 01 ສະບັບ (ເພື່ອຕິດຕາມ);
7. ເກັບມ້ຽນ 01 ສະບັບ.